# ຣາຊບັນດິດສະພາລາວ

ຂໍໄວ້ອາລັຍ

ແດ່

ເຈົ້າສະຖຽນ ນະຈຳປາສັກ

ເຖິງແກ່ກັມ ໃນວັນຈັນ ແຮມ ໑໒ ຄ່ຳ ເດືອນ ໗

ປີເຖາະ ພ.ສ. ໒໕໑໗

ກົງກັບ

ວັນທີ ໔ ສິງຫາ ຄ.ສ. ໑໙໗໕



ເຈົ້າສະຖຽນ ນະຈຳປາສັກ

ສະມາຊິກ ອາຊບັນດິດ ສະພາລາວ

ພິມແຈກ

ໃນພິທີຊາປານະກິດສົບ

ວັນທິດ ຂຶ້ນ ໓ ຄ່ຳ ເດືອນ ໙

ປີເຖາະ ພ.ສ. ໒໕໑໘

(ກົງກັບວັນທີ່ ໑໐ ສິງຫາ ໑໙໗໕ ເວລາ ໑໕ ໂມງ)

ຈັດພິມ ໂດຍ ສຳນັກງານຣາຊບັນດິດສະພາ

## ຄຳສະດຸດີໄວ້ອາລັຍແດ່ເຈົ້າສະຖຽນ ມະຈຳປາສັກ

ຂ້າພະເຈົ້າຂໍກ່າວຄຳສະດຸດີໄວ້ອາລັຍແດ່ເຈົ້າສະຖຽນ ມະຈຳປາສັກ ສະມາຊິກຣາຊບັນດິຕສະພາລາວ ທີ່ໄດ້ເຖິງແກ່ກັມໂດຍກະທັນຫັນ ເມື່ອວັນຈັນ ທີ່ ໔ ສິງຫາ ໑໙໗໕ ເວລາ ໑໔ ໂມງ ທີ່ບ້ານພັກຂອງທ່ານ ຄຳນວນອາຍຸໄດ້ ໖໗ ປີ.

### ຊີວະປວັດຫຍໍ້

ເຈົ້າສະຖຽນ ມະຈຳປາສັກ ເກີດເມື່ອວັນທີ່ ໒໑ ພິສຈິກາ ໑໙໐໘ ທີ່ຄຸ້ມວັດທົ່ງ ຕາແສງ ເມືອງນະຄອນຈຳປາສັກ ແຂວງຈຳປາສັກ ເປັນບຸດຂອງທ່ານມະຫາແກ້ວ ແລະ ເຈົ້ານາງສີວໍລັຍ, ສຳເຣັດການສຶກສາຈາກໂຮງຮຽນມັທຍົມປາວີປີທີ່ສອງ ທີ່ນະຄອນວຽງຈັນ.

ເຈົ້າສະຖຽນ ມະຈຳປາສັກ ໄດ້ແຕ່ງດອງກັບ ນາງດວງຈັນ ແຕ່ປີ ໑໙໔໘ ມີບຸດຊາຍ ແລະ ຍິງນຳກັນ ໑໑ ຄົນ

ຊາຍ ៥ ຄົນ ຍິງ ៦ ຄົນ :

໑. ທ້າວພວງພັນ (ຕາຍ)

໒. ນາງວັນນີ ແຕ່ງດອງກັບ ທ້າວວົງ ສີເນືອງ

໓. ທ້າວ ຄຳວອນ (ຕາຍ)

໔. ນາງສຸຄົນທາ ແຕ່ງດອງກັບ ຂ.ຕ.ທ. ອິນແປງ ທັມມະວົງສາ

໕. ທ້າວ ໂອພາສ ແຕ່ງດອງກັບ ນາງ ຍຸພິນ

໖. ນາງປະພາ ແຕ່ງດອງກັບ ທ້າວ ບຸນລອດ ລິທວີໄຊ

໗. ນາງ ສຸດາວັນ ແຕ່ງດອງກັບ ສວຕອ. ສຸນທອນ ຣັຕນະ

໘. ນາງສາວມະນີພູນ

໙. ທ້າວ ທີນນາດ ແຕ່ງດອງກັບ ນາງ ຄຳປານ

໑໐. ນາງ ວີລັຍວັນ ແຕ່ງດອງກັບ ທ້າວ ກາຍສິດ ສຸຣິສັກ

໑໑. ທ້າວ ທິພກອນ

**ໜ້າທີ່ຣາຊການ :**

- ໄດ້ຮັບຣາຊການເປັນຄຣູຊ່ວຍຊັ້ນ ໗ ໃນປີ ໑໙໒໗.
- ໄດ້ເລື່ອນເປັນຄຣູປະຖົມຊັ້ນ ໓ ໃນປີ ໑໙໓໐ ດ້ວຍຜ່ານການສອບເສັງ.
- ໄດ້ເລື່ອນເປັນສາຣະວັດສຶກສາຣອງຊັ້ນ ໑ ໃນປີ ໑໙໕໗ ດ້ວຍຜ່ານການສອບເສັງ.
- ໄດ້ເລື່ອນເປັນຂ້າຣາຊການຊັ້ນເອກ ອັນດັບ ໔ ໃນປີ ໑໙໖໔.
- ໄດ້ອອກກິນເບັ້ຽບຳນານ ໃນປີ ໑໙໖໓.

**ທີ່ທຳການ:**

- ເປັນຄຣູສອນປະຈຳຊັ້ນ ປ. ໔ ທີ່ໂຮງຮຽນຕັບຟ້ແຮງ ໃນປີ ໑໙໒໗.
- ເປັນຫົວໜ້າໂຮງຮຽນຫາດຂາວ ເມືອງວຽງຈັນ ໃນປີ ໑໙໓໐.
- ເປັນຫົວໜ້າໂຮງຮຽນ ເມືອງວັງວຽງ ໃນປີ ໑໙໓໑.
- ເປັນຫົວໜ້າໂຮງຮຽນຫາດຫລວງ ເມືອງວຽງຈັນ ໃນປີ ໑໙໔໑.

- ປະຈຳການຢູ່ໂຮງການຕັບປະເຮງ ໃນປີ ໑໙໔໖.
- ປະຈຳການຢູ່ຫ້ອງການຜູ້ກວດການປະຖົມສຶກສາ ທີ່ເມືອງ ປາກເຊ ໃນເດືອນ ມະກະຣາ ໑໙໔໗.
- ເປັນຫົວໜ້າໝວດໂຮງຮຽນ ເມືອງຈຳປາສັກ ໃນເດືອນ ກັນຍາ ໑໙໔໗.
- ເປັນຫົວໜ້າໝວດໂຮງຮຽນນາໄຊ ເມືອງວຽງຈັນ ໃນ ປີ ໑໙໕໒.
- ເປັນຫົວໜ້າສະຖານດຸຣິຍາງ ແລະ ນາຕສິນເພງຊາດໃນ ປີ ໑໙໕໙ ເຖິງ ໑໙໖໓.

<u>ໄປຕ່າງປະເທດ</u>

- ໄປນຳຄນະເຕະບານລະຫວ່າງຊາດທີ່ເມືອງເວ້ ປະເທດ ວຽດນາມໄຕ້ ໃນປີ ໑໙໖໖ ໃນຖານະເປັນນັກເສບເປົ່າ ແຄນ.
- ໄປຮ່ວມຊຸມນຸມສະກຸດທີ່ເມືອງດາລັດວຽດນາມໄຕ້ ໃນປີ ໑໙໖໒.
- ໄປຮ່ວມໃນງານສລອງທາງຣົດໄຟສາຍອິນດູຈີນ ( TRANSINDCCHINOIS ) ທີ່ເມືອງໄຊງ່ອນ ວຽດນາມໄຕ້ ໃນປີ ໑໙໖໒.

- ໄປຮ່ວມໃນງານຕລາດນັດທີ່ເມືອງໄຊງ່ອນ ໃນປີ ໑໙໔໘.
- ໄປອັດແຜ່ນສຽງເພັງຊາດ ທີ່ເມືອງຮາໂນຍ ວຽດນາມເໜືອ ໃນປີ ໑໙໔໘.
- ໄປຮ່ວມໃນງານຕລາດນັດ ທີ່ເມືອງໄຊງ່ອນ ຄັ້ງທີ່ສອງ ໃນປີ ໑໙໔໗.
- ໄປສຶກສາວິຊາຄຣູ ທີ່ປາຣີສ ປະເທດຝຣັ່ງເສດ ເປັນເວລາ ໓ ເດືອນ ໃນປີ ໑໙໕໓.
- ໄປຮ່ວມປະຊຸມດົນຕຣີນາໆຊາດ ທີ່ປາຣີສ ໃນປີ ໑໙໕໖.
- ໄປອົບຮົມວິຊານາຕສິນເປັນເວລາ ໖ ເດືອນ ທີ່ບາງກອກ ປະເທດໄທຍ ໃນປີ ໑໙໕໓.
- ໄປສັງເກດການ ໃນດ້ານສິລປະແລະວັທນະທັມທີ່ປະເທດອິນເດັຽ ເປັນເວລາ ໑ ເດືອນ ໃນປີ ໑໙໖໐.
- ໄປຮ່ວມໃນງານສລອງສາຍການບິນ ລະຫວ່າງ ວຽງຈັນ ໄທເປ ໃນປີ ໑໙໖໑.
- ໄປຮ່ວມໃນງານສະແດງສິລປະແລະວັທນະທັມລະຫວ່າງຊາດ ທີ່ສິງກະໂປ ໃນປີ ໑໙໖໓.
- ໄປເຝົ້າພຣະບາດສົມເດັດພຣະເຈົ້າມະຫາຊີວິດ ສະເດັດປະພາດປະເທດຣັດເຊັຽ ໃນປີ ໑໙໖໖.

- ໄປຮ່ວມສະແດງສິລປະວັທນະທັມ ທີ່ໄຊ່ງ່ອນ ໃນປີ ໑໙໖໗.

<u>ຫລຽນກາຄວາມຊອບ</u>

໑./ ຫລຽນຣາຊອິສຣິຍາພອນ ສົມເດັດພຣະເຈົ້າສີສວ່າງວົງ ຫລຽນທອງຂອງພຣະຣາຊອານາຈັກຫລວງພຣະບາງ.

໒./ ຫລຽນຣາຊອິສຣິຍາພອນລ້ານຊ້າງຮົ່ມຂາວ ພຣະຣາຊອານາຈັກຫລວງພຣະບາງ ຊັ້ນປັນຈະມາພອນ.

໓./ ຫລຽນຣາຊອິສຣິຍາພອນສົມເດັດພຣະເຈົ້າສີສວ່າງວົງ ຫລຽນເງິນຂອງພຣະຣາຊອານາຈັກລາວ.

໔./ ຫລຽນຣາຊອິສຣິຍາພອນລ້ານຊ້າງຮົ່ມຂາວ ພຣະຣາຊອານາຈັກລາວ ຊັ້ນຈະຕຸຖາພອນ.

໕./ ຫລຽນອຸທິສິກສາ ພຣະຣາຊອານາຈັກລາວ ຊັ້ນປັນຈະມາພອນ.

໖./ ຫລຽນພົລເມືອງດີ ພຣະຣາຊອານາຈັກລາວ ຊັ້ນຈະຕຸຖາພອນ.

ຖືກແຕ່ງຕັ້ງເປັນສະມາຊິກຂອງຣາຊບັນດິຕສະພາລາວ ໂດຍພຣະຣາຊໂອງການ ເລກທີ່ ໑໓໒ ລົງວັນທີ່ ໓໑-໓-໑໙໗໑.

ເຈົ້າສະຖຽນ ນະຈຳປາສັກ ນອກຈາກໄດ້ຮ່ວມງານກັບຂ້າພະເຈົ້າ ໃນຖານະສະມາຊິກຣາຊບັນດິດສະພາລາວແລ້ວຍັງໄດ້ເປັນເພື່ອນລູກສິດຮຽນໜັງສືດ້ວຍກັນກັບຂ້າພະເຈົ້າໃນຊັ້ນປະຖົມສຶກສາ ແລະສມັຍກ່ອນ ກໍຍັງໄດ້ຮ່ວມງານກັບຂ້າພະເຈົ້າໃນກົມຖແລງຂ່າວ ດ້ວຍວ່າທ່ານເປັນສະມາຊິກຄນະກັມມະການວັນນະຄະດີ ແລະຄນະກັມມະການລະຄອນລາວ ຈຶ່ງຮູ້ຈັກຄວາມສາມາດ ແລະຄວາມນິຍົມຊົມຊອບຂອງທ່ານໃນດ້ານວັນນະຄະດີ ແລະສິລປະດຸຣິຍາງນາຕສິນຢ່າງເອົາໃຈໃສ່ດ້ວຍຄວາມສຸຈຣິດ.

ສະນັ້ນ ຂ້າພະເຈົ້າຈຶ່ງຮູ້ຈັກນິດສັຍໃຈຄໍຂອງເຈົ້າສະຖຽນ ນະຈຳປາສັກ ເປັນຢ່າງດີ ທ່ານມີໃຈອ'ເຣີອາຣອບຕໍ່ຜູ້ໄດ້ເຂົ້າຄົບຫາສະມາຄົມກັບທ່ານ ເຖິງວ່າທ່ານບໍ່ໄດ້ຮັບການສຶກສາຂັ້ນມະຫາວິທຍາລັຍກໍດີ ທ່ານກໍມີຄວາມສາມາດໃນພາຣະກິດທີ່ຕົນເປັນຜູ້ຮັບຜິດຊອບນັ້ນເປັນຢ່າງດີ ເພາະວ່າທ່ານໄດ້ເຝິກຝົນຕົນເອງຢ່າງບໍ່ລົດລະ ແລະເປັນຜູ້ຂຍັນໝັ່ນພຽນຕລອດເວລາຮັບຣາຊການ ທ່ານຍັງເປັນຕົວຢ່າງທີ່ດີໃນການຖນອມຕົວ ເພື່ອບຳຣຸງສຸຂພາບທາງກາຍ ແລະໃຈ ເປັນພຸທສາສນິກະຊົນທີ່ບໍຣິສຸດ ເປັນພໍ່ເຮືອນທີ່ດີ ເປັນຜູ້ປະ

ກອບດ້ວຍຄຸນສົມບັດຜູ້ດີ ເປັນນັກປຣາດຊຶ່ງ ເຮົາຄົງຈະຄິດຮອດຄິດເຖິງ ໂດຍບໍ່ມີວັນລືມ.

ໃນນາມຂອງສະມາຊິກແລະພະນັກງານຂ້າຣາຊການຣາຊ-ດິດສະພາລາວທຸກທ່ານ ໃນນາມຂອງຄນະກັມມະການບໍຣິຫານຣາຊບັນດິດສະພາລາວ ແລະໃນນາມຂອງຂ້າພະເຈົ້າເອງ ຂ້າພະເຈົ້າ ຂໍສະແດງຄວາມໂສກເສົ້າຂອງພວກຂ້າພະເຈົ້າຢ່າງຈິງໃຈຕໍ່ພະຣິຍາຂອງ ເຈົ້າສະຖຽນ ນະຈຳປາສັກ ພ້ອມດ້ວຍຄອບຄົວແລະສະແດງຄວາມໄວ້ອາລັຍແດ່ ຜູ້ລ່ວງລັບທີ່ເຄີຍເປັນເພື່ອນຄນະຂອງພວກຂ້າພະເຈົ້າເປັນເວລາຫລາຍປີ.

ເຈົ້າສະຖຽນ ເພື່ອນຮັກ ພວກຂ້າພະເຈົ້າ ຂໍລາທ່ານໄປກ່ອນ ຂໍໃຫ້ດວງວິນຍານຂອງທ່ານ ຈົ່ງໄປສູ່ສຸຄຕິພົບເທີນ.

ປະທານຣາຊບັນດິດສະພາລາວ

ພຍາພູມີພາກ ພູວົງພົມມະສອນ

## ຄນະສະມາຊິກຣາຊບັນດິຕສະພາລາວ

### ປະທານຣາຊບັນດິຕສະພາລາວ :

- ພຍາພຸທິພາກ ( ພຸວົງ ພົມມະສອນ )

### ປະທານກິດຕິມະສັກ

- ພຍາຈິຕນະມີ (ສົມຈິນ ເປັງວົນ)
- ເຈົ້າພຍາຫລວງຫມື່ນລູກທ້າວ (ຜຸຍ ປັນຍາ)
- ພຍາບໍຣິຫານສຶກສາ (ບົງ ສຸວັນນະວົງ)
- ພຍາຄຸນວາທີ (ຄຸນ ພົລາວັນ)

### ທີ່ປຶກສາ :

- ມະຫາສີລາ ວີຣະວົງສ໌
- ເພັງສີສັດທັນ (ນວນ ອຸເທນສັກດາ)

### ຄນະກັມມະການບໍຣິຫານ :

- ພຍາພຸທິພາກ (ພຸວົງ ພົມມະສອນ) ປະທານ
- ພຍາເດຊາປະສິດ (ໄຕ ແກ້ວຫລວງໂຄຕ) ຮອງປະທານ
- ພຍາມິຕທັນ (ມິດ ສິງຫາຣາຊ) ກັມມະການ
- ພຍາສີຣິມະໂນທັມ (ຄຳສີ ສີຣິມະໂນທັມ) ກັມມະການ
- ທ່ານ ຄຳຟອງ ສຸວັນນະຣາຊ ກັມມະການ

ສະມາຊິກ :

- ເຈົ້າສະຖຽນ ນະຈຳປາສັກ
- ພຍາວັນເຣືອງ ວົງສາວັນທອງ
- ເພັຽພິພິດພັກດີ (ພຽກ ຈຸລມຸນຕີ)
- ເພັຽລັກສມະວິຈານ (ລອດ ກູສົມ)
- ເພັຽອະນຸຣັກອັກສອນສາດ (ອວນ ສ.ວົງກິດຣັຕນະ)
- ເພັຽຈຳນົງພັກດີ (ຈັນທີ ຈັນທະສຸດທິ)
- ເພັຽສີຣັກສາ (ທອງດີ ສີຣິສຸກ)
- ມະຫາບົວໄຫລ ແສງສວ່າງອຸທັຍ
- ທ່ານ ລົ້ງ ຣົງສິດ
- ພ.ທ. ອຳນຸກ ປຣີຊາຍານ
- ນາງພຍາບຸນຊູ ອຸນະນິກອນ
- ພຍາແກ້ວ ວົພາກອນ
- ພຍາສຸກົມ ວິໄລສານ
- ທ່ານຄຳອ້ວນ ຣັຕນະວົງ

ເລຂານຸການ

- ທ່ານສຸລົງ ເດຊວົງສາ

## ວາງພວງມາລາຕໍ່ໜ້າສົບ

## ຂອງ

## ເຈົ້າສະຖຽນ ນະຈຳປາສັກ

---== ໐໐ ==---

ເວລາ ໑໐ ໂມງ ວັນພຸດ ທີ່ ໖ ສິງຫາ ໑໙໗໕ ທ່ານພຍາພູມິພາກ (ພູວົງ ພົມມະສອນ) ປະທານຣາຊບັນດິດສະພາລາວ ພ້ອມດວຍຄນະກັມມະການບໍຣິຫານ, ສະມາຊິກຣາຊບັນດິດສະພາ ທີ່ຢູ່ໃນນະຄອນວຽງຈັນ ແລະ ຜູ້ຕາງໜ້າສຳນັກງານເລຂາຣາຊບັນດິດສະພາ ໄດ້ໄປວາງພວງມາລາ ທຳຄວາມໂຄຣົບສົບ ທີ່ບ້ານຂອງຜູ້ກ່ຽວ ຄຸ້ມຫາຍໂສກ ນະຄອນວຽງຈັນ ຊ້ອງໜ້າຄອບຄົວຂອງຜູ້ລ່ວງລັບ.

ລັງຈາກນັ້ນ ປະທານຣາຊບັນດິດສະພາ ກໍໄດ້ມອບຈະຕຸປັດໃຈສົມທົບຂອງສະມາຊິກຣາຊບັນດິດສະພາ ຈຳນວນ ໓໔.໐໐໐ ກີບ ໃຫ້ແກ່ນາງໜາຍ ດວງຈັນ ຜູ້ເປັນພັຣຍາ ຊ້ອງໜ້າສະມາຊິກຄອບຄົວ, ວົງສາຄະນາຍາດ ແລະບຸກຄົນສຳຄັນດັ່ງກ່າວ.

*　　*

*

ຣູປັງ ຊີຣະຕິ ມັຈຈານັງ

ນາມະ ໂຄຕັງ ນະຊີຣະຕິ

- ອັນທີ່ຮູບຮ່າງເນື້ອ ໜັງກະດູກທັງຫລາຍ
ຂອງຜູ້ນໍຣະມັງມຸດ ຈຸມຈິມທັງຄ້າຍ
ຍ່ອມຈັກສູນສລາຍສ້ຽງ ເພພັງເປ້ເປື່ອຍ
ບໍ່ວ່າມີທຸກຫລີ້ ສູງຊັ້ນຊາດສະກຸນ

- ອັນທີ່ບໍ່ເປື່ອຍເປ້ ສູນເຊື່ອມທະລາຍດັບ
ມີແຕ່ຄຸນຄວາມດີ ຊື່ສຽງກຽນກ້ອງ
ໃຜທຳຄວາມດີໄວ້ ກຽນຕິຄຸນກ້ອງເກື່ອນ
ກຽນຕິຄຸນນັ້ນແລ ຍັງທ່ຽງໝັ້ນ ສະຖຽນເທົ້າຕລອດການ

ສີລາ ວີຣະວົງ

ສະມາຊິກຣາຊບັນດິຕສະພາລາວ

============